**ມິຊຊາອາທິດທີ 3 ກໍານົດພຣະກຣິສຕະຄົມ**

**ວັນທີ 12 ທັນວາ 2021**



**ພຣະວໍລະສານໂດຍນັກບຸນລູກາ 3, 10-18**

ໃນເວລານັ້ນ, ຝູງຊົນຖາມຍວງບັບຕິສຕາວ່າ: ພວກຂ້າພະເຈົ້າຈະຕ້ອງທໍາຢ່າງໃດ? ຍວງຕອບວ່າ: ຜູ້ໃດມີເສື້ອສອງໂຕຈົ່ງປັນໃຫ້ຜູ້ບໍ່ມີ; ຜູ້ໃດມີກິນກໍຈົ່ງທໍາດັ່ງດຽວກັນ.

ພວກເກັບສ່ວຍກໍມາຮັບພິທີລ້າງດ້ວຍ, ພວກເຂົາຖາມວ່າ: ທ່ານອາຈານ, ພວກຂ້າພະເຈົ້າຈະຕ້ອງທໍາຢ່າງໃດ? ຍວງຕອບວ່າ: ພວກເຈົ້າຢ່າເກັບສ່ວຍເກີນອັດຕຣາເປັນອັນຂາດ. ຝ່າຍພວກທະຫານກໍຖາມວ່າ: ພວກຂ້າພະເຈົ້າເດຈະຕ້ອງທໍາຢ່າງໃດ? ທ່ານຕອບວ່າ: ພວກເຈົ້າຢ່າຂົ່ມເຫັງຜູ້ໃດເລີຍ, ຢ່າແຈ້ງຄວາມເທັດໃສ່ຜູ້ອື່ນແລະໃຫ້ພໍໃຈໃນເງິນເດືອນຂອງຕົນ.

ປະຊາຊົນຜູ້ກໍາລັງຄອງຖ້າຢູ່ ຕ່າງພາກັນຄຶດວ່າ ຍວງນີ້ອາດຈະແມ່ນພຣະກຣິສໂຕກໍບໍ່ຮູ້. ຍວງຈຶ່ງເວົ້າກັບພວກເຂົາວ່າ: ເຮົາລ້າງພວກເຈົ້າດ້ວຍນໍ້າເທົ່ານັ້ນ. ແຕ່ຍັງມີອີກຜູ້ໜຶ່ງຊົງອໍານາດກວ່າເຮົາພວມຈະມາ. ເຮົາເອງບໍ່ສົມຈະແກ້ສາຍເກີບຂອງພຣະອົງຊໍ້າ. ພຣະອົງນັ້ນຈະລ້າງພວກເຈົ້າໃນພຣະຈິດເຈົ້າແລະໄຟ. ພຣະອົງຈະຖືກະດົ້ງຝັດມາ ເພື່ອຝັດເຂົ້າໃນລານໃຫ້ສະອາດ ແລ້ວຂົນເຂົ້າດີຂຶ້ນໃສ່ເລົ້າ. ສ່ວນເຟືອງນັ້ນຈະເອົາໄປຖິ້ມໃສ່ໄຟອັນບໍ່ຮູ້ມອດ.

ທ່ານຍວງຍັງໄດ້ປະກາດຂ່າວປະເສີດໂດຍເຕືອນສອນປະຊາຊົນອີກຫລາຍຢ່າງ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 3, 10-18**

ບົດອ່ານທັງສອງບົດພ້ອມທັງເພງສັກສິດໃນວັນອາທິດທີສາມແຫ່ງກຳນົດພຣະກຣິສຕະຄົມນີ້ລ້ວນແຕ່ກ່າວເຖິງຄວາມຍິນດີ. ຍ້ອນວ່າອົງພຣະຜູ້ກູ້ໄຖ່ໃກ້ມາຮອດແລ້ວ. ພຣະອົງມາເພື່ອນຳຄວາມຮອດ, ສັນຕິສຸກແລະຄວາມຍຸດຕິທຳມາໃຫ້ພວກເຮົາ. ແຕ່ພວກເຮົາຕ້ອງຕຽມຕົວຢ່າງໃດເພື່ອຈະຕ້ອນຮັບພຣະອົງ? ຄຳຖາມນີ້ບໍ່ພຽງແຕ່ພວກເຮົາທີ່ຈະຖາມຕົວເອງເທົ່ານັ້ນ, ແຕ່ຍັງເປັນຄຳຖາມຂອງຄົນໃນສະໄໝຂອງທ່ານຢວງບັບຕິສຕາອີກດ້ວຍ. ດັ່ງທີ່ພວກເຮົາໄດ້ຍິນໃນວາຈາພຣະເຈົ້າວັນນີ້. ເມື່ອເວລາສິ້ນສຸດການເທດສອນຂອງທ່ານຢວງບັບຕິສຕາໃນເຂດແມ່ນ້ຳຢໍແດນ. ກໍມີຝູງຊົນ, ຄົນເກັບສ່ວຍແລະພວກທະຫານເຂົ້າມາຖາມທ່ານຢວງວ່າ: ພວກເຂົາຕ້ອງທຳຢ່າງໃດເພື່ອຈະໄດ້ຮອດ? ແລະຄຳຕອບຂອງທ່ານຢວງກໍຄື: ຈົ່ງຮູ້ຈັກແບ່ງປັນແລະຢູ່ໃນຄວາມຍຸດຕິທຳ. ຫລືເວົ້າອີກຢ່າງ, ຈົ່ງຮັກແພງຊຶ່ງກັນແລະກັນໃນຄວາມຈິງ. ຍ້ອນຫຍັງ? ຍ້ອນວ່າພຣະຜູ້ກູ້ໄຖ່ທີ່ຈະສະເດັດມານີ້ ພຣະອົງເປັນອົງແຫ່ງຄວາມຮັກ. ພຣະອົງມາໃນໂລກນີ້ຍ້ອນຮັກມະນຸດ. ຄວາມຮັກນີ້ໄດ້ສະແດງອອກມາຢ່າງແທ້ຈິງເມື່ອພຣະອົງສະລະຊີວິດຂອງຕົນເທິງໄມ້ກາງເຂນເພື່ອໄຖ່ບາບພວກເຮົາ. ດ້ວຍເຫດນີ້, ພຣະອົງຈຶ່ງປາດຖະໜາໃຫ້ພວກເຮົາຮູ້ຈັກຮັກແພງຊຶ່ງກັນແລະກັນເໝືອນກັບພຣະອົງຊົງຮັກແພງພວກເຮົາ.

ພຣະຜູ້ກູ້ໄຖ່ທີ່ຈະມາເຖິງນີ້ ພຣະອົງກໍເປັນອົງແຫ່ງຄວາມຈິງ. ຄວາມຈິງກ່ຽວກັບຄວາມຮັກທີ່ພຣະບິດາຊົງມີຕໍ່ພວກເຮົາຜ່ານທາງພຣະເຢຊູພຣະບຸດຂອງພຣະອົງ. ຄວາມຈິງທີ່ພວກເຮົາທຸກຄົນມີພຣະບິດາອົງດຽວກັນຢູ່ສະຫວັນ ຜູ້ຊຶ່ງຮັກແພງແລະພ້ອມທີ່ຈະໃຫ້ອະໄພພວກເຮົາະເໝີ. ດ້ວຍເຫດນີ້, ຜູ້ໃດຢູ່ຝ່າຍຄວາມຈິງ, ຜູ້ນັ້ນກໍຢູ່ໃນພຣະເຢຊູເຈົ້າ. ແລະພຣະອົງກໍປາດຖະໜາໃຫ້ພວກເຮົາເປັນພິຍານເຖິງຄວາມຈິງອັນແມ່ນພຣະອົງເອງໃນຊີວິດຂອງພວກເຮົາ. ເມື່ອພວກເຮົາປະຕິບັດສິ່ງເຫລົ່ານີ້ແລ້ວ, ພວກເຮົາກໍຈະມີສັນຕິສຸກແລະຄວາມຍິນດີທີ່ມາຈາກພຣະເຈົ້າ.

**ພາວະນາ**

ມາຣານາທາ, ໂຜດສະເດັດມາເຖີດ ໂອພຣະເຢຊູເຈົ້າ! ໂຜດນຳສັນຕິສຸກ, ຄວາມຊອບທຳແລະຄວາມຍິນດີມາໃຫ້ພວກລູກດ້ວຍ. ເພື່ອພວກລູກຈະໄດ້ຢູ່ໃນພຣະອົງແລະພຣະອົງຈະໄດ້ບັງເກີດໃນຈິດໃຈຂອງພວກລູກດ້ວຍ. ມາຣານາທາ, ໂຜດສະເດັດມາເຖີດ ໂອພຣະເຢຊູເຈົ້າ! ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ